ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ຂາເຂົ້າ ເລກທີ: 1034
ວັນທີ: 11 AUG 2015

ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----=====000====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານ ຄຄຊ

ເລກທີ 002 /ສຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 11 AUG 2015

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ຝ່າຍການເງິນ
ຂາເຂົ້າ ເລກທີ: 348
ວັນທີ: 11 AUG 2015

**ເຖິງ:** ທ່ານຜູ້ອຳນວຍການໃຫຍ່ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື,

**ເລື່ອງ:** ອະນຸມັດການອອກຈຳໜ່າຍຮຸ້ນເພີ່ມຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.

- ອີງຕາມລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນ ສະບັບເລກທີ 018/ຄຄຊ ລົງວັນທີ 27 ກໍລະກົດ 2015;
- ອີງຕາມໃບຄຳຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ລົງວັນທີ 21 ພຶດສະພາ 2015.

ສຳນັກງານ ຄຄຊ ຂໍແຈ້ງມາຍັງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຊາບວ່າ ຜ່ານການຄົ້ນຄວ້າເອກະສານຄຳຮ້ອງຂໍອອກຈຳໜ່າຍຮຸ້ນເພີ່ມທຶນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ສຳນັກງານ ຄຄຊ ເຫັນດີອະນຸມັດ ໃຫ້ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ອອກຈຳໜ່າຍຮຸ້ນເພີ່ມທຶນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ ຕາມການສະເໜີຂອງ ບໍລິສັດ. ສະນັ້ນ, ເພື່ອປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ ແລະ ເຮັດໃຫ້ມວນຊົນ ແລະ ຜູ້ຖືຮຸ້ນເດີມ ໄດ້ຮັບຊາບຂໍ້ມູນຂ່າວສານກ່ຽວກັບການອອກຈຳໜ່າຍຮຸ້ນໃນຄັ້ງນີ້ ສຳນັກງານ ຄຄຊ ສະເໜີໃຫ້ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຈັດຕັ້ງການໂຄສະນາ ແລະ ເປີດເຜີຍຂໍ້ມູນ ກ່ຽວກັບການໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນດັ່ງກ່າວຜ່ານພາຫະນະສື່ມວນຊົນຢ່າງໜ້ອຍ ຫ້າວັນລັດຖະການ ຕໍ່ເນື່ອງ ພ້ອມທັງເຜີຍແຜ່ໜັງສືຊວນຊື້ສະບັບສົມບູນ ຜ່ານທາງລະບົບເປີດເຜີຍຂໍ້ມູນຕາມການກຳນົດຂອງ ສຳນັກງານ ຄຄຊ ເປັນໄລຍະເວລາຢ່າງໜ້ອຍ ຫ້າວັນຕໍ່ເນື່ອງ ກ່ອນວັນເປີດການຈອງຊື້ຮຸ້ນ (ໃບອະນຸຍາດ ຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ຮັກສາການຫົວໜ້າ ສຳນັກງານ ຄຄຊ**

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານ ຄຄຊ

ທ້າວ ສະໝອນ ຈັນທະຈັກ

❖ ສຳເນົາສົ່ງ:

- ບໍລິສັດ ຫຼັກຊັບລ້ານຊ້າງ ມະຫາຊົນ 1 ສະບັບ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ